ແຜນການສອນ

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 24 ທັນວາ 2006 ( 12-24-2006 )

---

## ພຣະເຢຊູ, ຂອງຂວັນທີ່ຍິ່ງໃຫຍ່ຂອງພຣະເຈົ້າ:

**ຂໍ້ພຣະຄັມພີໃນບົດຮຽນ:** ລູກາ 1:26-35;2:4-7

**ຄວາມຈິງໃນພຣະຄັມພີ:** ການເກີດຂອງພຣະເຢຊູມີຄວາມພິເສດ ເພາະວ່າພຣະອົງເປັນພຣະບຸດຂອງພຣະເຈົ້າ, ເປັນພຣະຜູ້ຊ່ອຍໃຫ້ພົ້ນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນເພື່ອຊ່ອຍທ່ານໃຫ້ມີປະສົບການຊີວິດ - ທີ່ມີການສັບປ່ຽນພອນສວັນຂອງພຣະເຈົ້າໂດຍ:

- ການສະທ້ອນຕໍ່ທາງຂອງພຣະເຈົ້າໃນການສົ່ງພຣະຜູ້ໂຜດໃຫ້ພົ້ນ, ແລະ
- ການອະທິບາຍວ່າການເກີດຂອງພຣະເຢຊູມີຄວາມໝາຍຫຍັງຕໍ່ທ່ານ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຽັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

## ບົດນຳ:

1. ໃຫ້ນັກຮຽນເລົ່າຄວາມຮູ້ສຶກໃນປະສົບການທີ່ເຂົາເຈົ້າມີໃນຊ່ວງຣະດູຄຣິສມາສວ່າ ເຂົາເຈົ້າມີຄວາມປະທັບໃຈໃນການໄປມາຫາສູ່ກັນ, ສເລີມສລອງວັນພຣະກຳເນີດຂອງພຣະເຢຊູຄຣິດຮ່ວມກັນ. ບົດຮຽນວັນນີ້ຈະຊ່ອຍເຮົາໃຫ້ກະຕວງວ່າພຣະເຈົ້າມີພຣະປະສົງຢາກໃຫ້ເຮົາຮູ້ເຣື່ອງຄຣິສມາສ.

2) **ຄຳຖາມ:** ເຣື່ອງຂອງຄຣິສມາສຍັງເປັນເຣື່ອງມະຫັສຈັນສຳລັບທ່ານຢູ່ບໍ? ຫລືເປັນນິທານທີ່ເຄີຍໄດ້ຍິນປະຈຳແລ້ວກໍບໍ່ມີຄວາມໝາຍຫຍັງສຳລັບທ່ານອີກແລ້ວບໍ? ໃຫ້ນັກຮຽນເລົ່າເຣື່ອງທີ່ມີຄວາມໝາຍຕໍ່ຄອບຄົວຂອງເຂົາເຈົ້າ ເພາະວ່າເຂົາເຈົ້າໄດ້ເອົາພຣະເຢຊູເປັນສູນກາງໃນການສລອງຄຣິສມາສ.

**1. ເຢຊູຄືພຣະນາມຂອງພຣະອົງ:** ( ລູກາ 1:26-31 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ລູກາ 1:26-31 (ທັສນະຂອງນາງມາຣີອາ ) ທ່ານສາມາດໄປອ່ານພຣະທັມ ມັດທາຍ 1:19-21 ( ທັສນະຂອງທ່ານໂຢເຊບ) ຂຽນຄຳວ່າ " ເຢຊູ " ໃສ່ກະດານ ແລ້ວຖາມນັກຮຽນວ່າ:

2) **ຄຳຖາມ:** ຄຳວ່າ " ເຢຊູ " ມີຄວາມໝາຍຫຍັງໃນການດຳຣົງຊີວິດຂອງທ່ານ? ( ໃຫ້ນັກຮຽນອອກຄວາມຄິດຄວາມເຫັນນຳກັນ ).

3) **ອະທິບາຍ:** ໃຫ້ແຕ່ງເປັນຄຳຖາມຫລາຍ ໆ ຂໍ້ທີ່ມີຄວາມກ່ຽວພັນກັບການເກີດຂອງພຣະເຢຊູຄຣິດໂດຍເອົາພຣະຄັມພີເປັນຫລັກແຕ່ລະຂັ້ນຕອນມາສຶກສາຊຶ່ງສະແດງອອກເຖິງ "ຂອງຂວັນພຣະເຈົ້າ".

**ຄຳຖາມ:** - ໃຜໄດ້ຮັບການໂປດປານຈາກພຣະເຈົ້າ?

- ການເກີດຂອງພຣະເຢຊູທີ່ຄິດບໍ່ເຖິງນັ້ນພຣະເຈົ້າໄດ້ຊົງເຮັດໃຫ້ສຳເຣັດຕາມພຣະປະສົງຂອງພຣະອົງໃນທາງໃດ?
- ການເກີດຂອງພຣະເຢຊູເປັນໄປຕາມແຜນການຂອງພຣະເຈົ້າຢ່າງໃດ?

4) **ສົນທະນາ:** ເຣື່ອງການທີ່ພຣະເຈົ້າໂປດປານນາງມາຣີອາ; ພຣະເຈົ້າໂປດປານນາງມາຣີອານັ້ນບໍ່ແມ່ນດ້ວຍພື້ນຖານຄວາມດີຂອງນາງແຕ່ເປັນຣິດເດດຂອງພຣະເຈົ້າທີ່ຢູ່ເໜືອຊີວິດຂອງນາງ, ການທີ່ພຣະເຈົ້າໄດ້ຊົງເລືອກທ່ານໂຢເຊບໃຫ້ຮັບພາຣະໜ້າທີ່ອັນຍາກລຳບາກເພື່ອກຽດອັນສູງສົ່ງ.

- ພຣະເຈົ້າຊ່ອຍເຮົາໃຫ້ຮຽນຈາກພາຣະໜ້າທີ່ຂອງໂຢເຊບຢ່າງໃດ?
- ແມ່ນຫຍັງທີ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ການເກີດລູກໂດຍທີ່ບໍ່ໄດ້ແຕ່ງງານ ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ລູກາ 1:26-31

1) ໂຢເຊບມີປະຕິກິຣິຍາຢ່າງໃດກັບນາງມາຣີອາ?
2) ພຣະເຈົ້າໄດ້ຊົງປ່ຽນປະຕິກິຣິຍານີ້ຢ່າງໃດ?
3) ພຣະເຈົ້າສະແດງໃຫ້ຮູ້ເຫດການນີ້ຢ່າງໃດ??
4) ທ່ານຄິດວ່າແມ່ນຫຍັງທີ່ເຮັດໃຫ້ນາງມາຣີອາຕົກໃຈຢ້ານກົວ ?
5) ເທວະດາຄັບຣີເອນຊ່ອຍນາງມາຣີອາໃຫ້ຫາຍການຕົກໃຈຢ້ານກົວ?

**2. ພຣະເຢຊູເປັນພຣະບຸດຂອງພຣະເຈົ້າ:** ( ລູກາ 1:32-35 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ລູກາ 1:32-35
2) **ຄຳຖາມ:** ໃນການປະກາດນີ້ໄດ້ສະແດງໃຫ້ທ່ານແລະຂ້າພະເຈົ້າເຫັນວ່າເປັນແນວໃດ?
3) **ອະທິບາຍ:** ເວົ້າງ່າຍ ໆ ຄວາມໝາຍສຳຄັນຂອງ: " **ພຣະບຸດຜູ້ສູງສຸດ ກັບ ພຣະບຸດຂອງພຣະເຈົ້າ** " ມາເປັນຈຸດສົນໃຈ. ໃນສມັຍພຣະຄັມພີເດີມ ພວກຄົນຢິວຖືວ່າພຣະເຢຊູເປັນຜູ້ທີ່ມີຄວາມສັມພັນກັບພຣະເຈົ້າພິເສດ. ( ເຂົາບໍ່ຮູ້ວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າ ແລະຊົງເປັນພຣະເຈົ້າ )
4) **ຄຳຖາມ:** 1) ເຣື່ອງນີ້ໄດ້ສອນເຮົາເຣື່ອງພຣະເຢຊູຢ່າງໃດແດ່?

   2) ພຣະເຢຊູແມ່ນໃຜ?

   3) ພຣະອົງສະເດັດມາມີເຫດຜົນຫຍັງ?

   4) ຊີວິດຂອງພຣະເຢຊູມີຄວາມໝາຍຫຍັງສຳລັບທ່ານ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ລູກາ 1:32-35

1. ເທວະດາຄັບຣີເອນເອົາເຣື່ອງຄວາມຈິງຂອງພຣະເຢຊູມາຈາກໃສ?
2. ທ່ານສາມາດບັລຍາຍເຣື່ອງຣາຊອານາຈັກຂອງພຣະເຈົ້າໄດ້ບໍ່?
3. ບົດບາດຂອງພຣະວິນຍານບໍຣິສຸດໃນການບັງເກີດຂອງພຣະເຢຊູຄືແນວໃດ?

**3. <u>ພຣະເຢຊູເປັນຂອງຂວັນຂອງພຣະເຈົ້າ:</u>** ( ລູກາ 2:4-7

ສລູບຖ້ອຍຄໍາໃນພຣະທັມລູກາບົດທີ 2:1-3 ໄປອ່ານພຣະທັມ ມີກາ 5:2 ເຮົາໄດ້ຂໍ້ມູນວ່າພຣະເຈົ້າຊົງໃຊ້ຜູ້ປົກຄອງຈັກກະພັດໂຣມັນ ນໍາເອົາເຣື່ອງການມາບັງເກີດຂອງພຣະເຢຊູມາປະກາດ.

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ລູກາ 2:4-7

2) ໃຫ້ຍົກເອົາສະພາບການບັງເກີດຂອງພຣະເຢຊູທີ່ເປັດເລເຮັມຕາມຄວາມຮູ້ໃນພຣະຄັມພີ ແລະການເຕີບໃຫຍ່ຂື້ນໃນບ້ານນາຊາເຣັດ. ພາຣະກິຈຂອງພຣະອົງໃນໂລກນີ້, ຊີ້ຈຸດຕ່າງໆ ໃນການເຮັດການອັສຈັນ, ການສະແດງຣິດອໍານາດຂອງພຣະເຈົ້າ, ການສະເດັດມາກຸງເຢຣູຊາເລັມ, ການຖືກຄຶງທີ່ໄມ້ກາງແຂນ, ການຟື້ນພຣະຊົນໃນວັນຖ້ວນສາມ, ການສະເດັດສູ່ສວັນ, ພຣະອົງໄດ້ນັ່ງເບື້ອງຂວາພຣະຫັດຂອງພຣະເຈົ້າ ພຣະບິດາ, ພຣະອົງຈະສະເດັດກັບມາອີກຮັບເອົາພວກເຮົາໄປຢູ່ກັບພຣະອົງໃນສວັນ. ນີ້ເປັນການຊ່ອຍໃຫ້ພວກເຮົາໄດ້ຣອດພົ້ນຈາກຄວາມຜິດຄວາມບາບ ແລະຈາກນະຣົກບຶງໄຟ.

- ພວກເຮົາສູນເສັຽຫຍັງ ເມື່ອເຮົາປະພຣະເຢຊູໄວ້ໃນຮາງຫຍ້າ?

3) **ຄໍາຖາມ:** 1) ພຣະເຈົ້າຊົງນໍາເອົາສະພາບການນີ້ມາເປີດເຜີຍຜ່ານທາງຊີວິດຂອງນາງມາຣີອາ ແລະໂຢເຊບຢ່າງໃດ?
2) ພຣະເຈົ້າມີພຣະປະສົງໃນຊີວິດຂອງທ່ານຢ່າງໃດແດ່?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ລູກາ 2:4-7

1. ຫລັງຈາກພຣະເຢຊູບັງເກີດແລ້ວທ່ານຄິດວ່າ ນາງມາຣີອາ ແລະໂຢເຊບມີຄວາມຮູ້ສຶກຢ່າງໃດ?
2. ການບັງເກີດຂອງພຣະເຢຊູໄດ້ສ້າງຄວາມສັບສົນໃຫ້ແກ່ທ່ານແດ່ບໍ່?
3. ຕໍ່ຄວາມວິຕົກກັງວົນຂອງທ່ານ ພຣະເຈົ້າໄດ້ເລົ້າໂລມໃຈທ່ານຢ່າງໃດ?
4. ຖ້າຫາກເຮົາປະພຣະເຢຊູໄວ້ໃນຮາງຫຍ້າ ຂ່າວຄາວຂອງພຣະອົງຈະເປັນໄປຢ່າງໃດ?
5) ພະລັງອໍານາດຫຍັງ ທີ່ເຮັດໃຫ້ພຣະອົງນອນຢູ່ໃນຮາງຫຍ້າ?
6) ດຽວນີ້ທ່ານເຊື່ອວ່າພຣະເຢຊູຢູ່ໃສ?

**<u>ສລູບ</u>:**

1. **ອະທິບາຍ:** ເພື່ອໃຫແຮົາໄດ້ລະນຶກເຖິງເຣື່ອງພຣະເຢຊູເປັນຂອງຂວັນຈາກພຣະເຈົ້າໃນຂະນະທີ່ຄົນທັງຫລາຍກໍາລັງສເລີມສລອງຄຣິສມາສຮ່ວມກັບຄອບຄົວແລະເພື່ອນຝູງຂອງເຂົາເຈົ້າ.
2. ເພື່ອໃຫ້ຄອບຄົວມີໂອກາດລະນຶກເຖິງທົນທາງທີ່ດີທີ່ສຸດຂອງພຣະເຢຊູຄຣິດ ຂໍໃຫ້ທຸກຄົນໄດ້ມີສ່ວນນໍາ .
3. ທຸກຄົນສາມາດມີສ່ວນແບ່ງປັນໃນຄວາມຊົມຊື່ນຍິນດີໃນແຜນການຂອງພຣະເຈົ້າໃນເຣື່ອງຂອງຂວັນພິເສດນີ້ກັບຄົນອື່ນ.
4. ທົບທວນຄວາມຈິງທີ່ໄດ້ມາຈາກປະຫວັດຄວາມເປັນມາຂອງຄຣິສມາສແລະຄວາມຈິງເຫລົ່ານີ້ ໄດ້ມີຜົນປໂຍດຕໍ່ການດໍາຣົງຊີວິດຢ່າງໃດ?
5. ການສເລີມສລອງວັນຄຣິສຕ໌ມາສຂອງພວກເຮົາໃນທຸກມື້ນີ້ມີຄວາມໝາຍຫຍັງສໍາລັບເຮົາ?
6. ໃນມື້ນີ້ຂໍໃຫ້ທ່ານພານັກຮຽນສັຣເສີນພຣະເຈົ້າດ້ວຍການອະທິຖານ, ຮ້ອງເພງສັຣເສີນ ແລະເວົ້າວ່າ:

" ສຸກສັນວັນຄຣິສມາສຕໍ່ກັນ ( ຖ້າມີຂອງຂວັນກໍແລກປ່ຽນກັນ ) ແລະອະທິຖານປິດຫ້ອງຮຽນ.

**ລາວຊາວເທິນບັບຕິສສັມພັນ ແປແລະຮຽບຮຽງໂດຍ J.H.**